ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 03 /ສພຂ.ຊຍ
ໄຊຍະບູລີ, ວັນທີ 13 ມັງກອນ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບ ການສະຫຼຸບຂາດຕົວແຜນງົບປະມານແຫ່ງລັດຂອງແຂວງ ປີ 2022 ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2023 ແລະ ທິດທາງແຜນການ ປີ 2024

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ແລະ ມາດຕາ 59.
- ອີງຕາມ ບົດລາຍງານຂອງ ອົງການປົກຄອງແຂວງ ໃນກອງປະຊຸມ ຄັ້ງວັນທີ 11 ມັງກອນ 2024.

ຜ່ານການປະກອບຄໍາເຫັນ, ຄົ້ນຄວ້າພິຈາລະນາ ຢ່າງເລິກເຊິ່ງ ຂອງ ສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບ ການສະຫຼຸບຂາດຕົວແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2022, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປີ 2023 ແລະ ທິດທາງແຜນການ ປີ 2024. ໃນກອງປະຊຸມສະໄຫມສາມັນ ເທື່ອທີ 6 ສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາບົດລາຍງານຂອງ ອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2022

ກອງປະຊຸມ ສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ຊີ້ນໍາໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງຢ່າງຕັ້ງໜ້າ ແລະ ເຫັນດີຕໍ່ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2022 ດັ່ງນີ້:

1. ລາຍຮັບທັງໝົດ: ປະຕິບັດໄດ້ທັງໝົດ: 1.197,84 ຕື້ກີບ, ເທົ່າກັບ 106,44% ຂອງແຜນການປີ.
   - ລາຍຮັບພູດສູນກາງ: ປະຕິບັດໄດ້ 920,34 ຕື້ກີບ, ເທົ່າກັບ 103,31% ຂອງແຜນການປີ.

- ລາຍຮັບພາຍໃນແຂວງ: ປະຕິບັດໄດ້ 277,50 ຕື້ກີບ, ເທົ່າກັບ 114,15% ຂອງແຜນການປີ.

2. ລາຍຈ່າຍທັງໝົດ: ປະຕິບັດໄດ້ 536,49 ຕື້ກີບ, ເທົ່າກັບ 99,95% ຂອງແຜນການປີ.
3. ດຸນດ່ຽງງົບປະມານ: ປະຕິບັດໄດ້ 258,99 ຕື້ກີບ, ເທົ່າກັບ 88,20% ຂອງແຜນການປີ.

ມາດຕາ 2 ຮັບຮອງເອົາບົດລາຍງານຂອງ ອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ **ແຫ່ງລັດຂອງແຂວງ ປະຈຳປີ 2023**

ກອງປະຊຸມ ສະພາປະຊາຊົນແຂວງ ເຫັນດີເປັນເອກະພາບ ຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ແລະ ສະແດງຄວາມຊົມເຊີຍ ອົງການປົກຄອງແຂວງ ທີ່ເອົາໃຈໃສ່ ຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ຢ່າງຕັ້ງໜ້າ ແລະ ມີຜົນສຳເລັດຫຼາຍດ້ານ ໂດຍ ສະເພາະການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ສາມາດປະຕິບັດໄດ້ດັ່ງນີ້:

1. ລາຍຮັບທັງໝົດ: ສາມາດປະຕິບັດລາຍຮັບໄດ້ທັງໝົດ: 1.765,43 ຕື້ກີບ ເທົ່າກັບ 116,55% ຂອງແຜນການປີ ໃນນີ້:
   - ລາຍຮັບພູດສູນກາງ: ປະຕິບັດໄດ້ 1.101,12 ຕື້ກີບ, ເທົ່າກັບ 109,02% ຂອງແຜນການປີ.
   - ລາຍຮັບພາຍໃນແຂວງ: ປະຕິບັດໄດ້ 664,30 ຕື້ກີບ, ເທົ່າກັບ 131,61% ຂອງແຜນການປີ.
2. ລາຍຈ່າຍທັງໝົດ: ປະຕິບັດໄດ້ 601,44 ຕື້ກີບ, ເທົ່າກັບ 115,63% ຂອງແຜນການປີ.
3. ດຸນດ່ຽງງົບປະມານ: ປະຕິບັດໄດ້ 62,86 ຕື້ກີບ.

ມາດຕາ 3 ຮັບຮອງເອົາ ທິດທາງແຜນງົບປະມານແຫ່ງລັດຂອງແຂວງ **ປີ 2024**

ກອງປະຊຸມຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ຕາມການສະເໜີຂອງອົງການປົກຄອງແຂວງ ດັ່ງນີ້:

1. ລາຍຮັບທັງໝົດ 2.092,29 ຕື້ກີບ, **ໃນນີ້:**
   - ລາຍຮັບພູດສູນກາງ 1.377,00 ຕື້ກີບ;
   - ລາຍຮັບຂອງແຂວງທັງໝົດ 715,29 ຕື້ກີບ;
     + ລາຍຮັບຂອງແຂວງປົກກະຕິ 209,55 ຕື້ກີບ;
     + ລາຍຮັບທີ່ສູນກາງມອບໃຫ້ແຂວງ 505,73 ຕື້ກີບ;
2. ລາຍຈ່າຍທັງໝົດ 525,60 ຕື້ກີບ (ບໍ່ລວມລາຍຈ່າຍການລົງທຶນຂອງລັດ) ໃນນີ້:
   - ເງິນເດືອນ+ເງິນນະໂຍບາຍ (ພາກ 60+61) 452,97 ຕື້ກີບ;
   - ເງິນບໍລິຫານລັດ (ພາກ 62) 55,42 ຕື້ກີບ;
   - ເງິນດັດສົມ-ສົ່ງເສີມ (ພາກ 63) 14,20 ຕື້ກີບ;
   - ເງິນແຮບັງເອີນອື່ນໆ (ພາກ 65) 2,50 ຕື້ກີບ;
   - ເງິນຊື້ຊັບສົມບັດຄົງທີ່ (ພາກ 66) 0,50 ຕື້ກີບ;
   - ເງິນລົງທຶນຂອງລັດ (ພາກ 67) ແຈ້ງພາຍຫຼັງໄດ້ຮັບອານຸມັດມູນຄ່າການລົງທຶນຂອງລັດ;
3. ດຸນດ່ຽງງົບປະມານ: ດຸນຄືນໃຫ້ສູນກາງ 189,68 ຕື້ກີບ.

ມາດຕາ 4 ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂອງແຂວງ ປີ 2024

ກອງປະຊຸມຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ຕາມການລາຍງານຂອງອົງການປົກຄອງແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ໃຫ້ບັນລຸຕາມແຜນ, ກອງປະຊຸມ ສະເໜີ ໃຫ້ເອົາໃຈໃສ່ ບາງມາດຕະການ ເພີ່ມເຕີມ ດັ່ງນີ້:

1. ດ້ານລາຍຮັບ

1.1 ສຸມໃສ່ຈັດເກັບລາຍຮັບຈາກຖານລາຍຮັບທີ່ມີໃຫ້ຄົບຖ້ວນ ດ້ວຍເຄື່ອງມືທັນສະໄໝ ແລະ ມາດຕະການທີ່ມີຢູ່ ໄປພ້ອມກັບອັດທຸກຊ່ອງວ່າງການຮົ່ວໄຫລ ຂອງລາຍຮັບງົບປະມານ. ພ້ອມກັບສືບຕໍ່ສ້າງຖານລາຍຮັບໃໝ່ທີ່ເປັນທ່າແຮງຈາກ ຂະແໜງຊັບພະຍາກອນ, ການຄຸ້ມຄອງແຮງງານ ການບໍລິການ-ທ່ອງທ່ຽວ ແລະ ອື່ນໆ;

1.2 ເອົາໃຈໃສ່ປະເມີນຄືນຖານລາຍຮັບຈາກ ການເຊົ່າສໍາປະທານ, ການຂຸດຄົ້ນແຮ່ທາດ, ລວມທັງສືບຕໍ່ຕິດຕາມຊຸກຍູ້ ແລະ ຂະຫຍາຍ ການຫັນເປັນທັນສະໄໝ ໃນການເກັບລາຍຮັບດ້ວຍລະບົບເອເລັກໂຕຣນິກ ໃຫ້ທົ່ວເຖິງ ແລະ ສໍາເລັດໂດຍໄວ;

1.3 ສືບຕໍ່ເກັບກູ້ລາຍຮັບຊັບສິນທີ່ຖືກຮິບ ຈາກການປະຕິບັດຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຈັດຕັ້ງການປະມູນຂາຍ ເພື່ອນໍາເງິນເຂົ້າງົບປະມານແຫ່ງລັດ, ເລັ່ງທວງ ແລະ ມີມາດຕະການ ໃນການເກັບກູ້ຄືນໜີ້ຕ້ອງຮັບຈາກ ບັນດາຫົວໜ່ວຍງົບປະມານລັດ ແລະ ຫົວໜ່ວຍທຸລະກິດເອກະຊົນ;

1.4 ເອົາໃຈໃສ່ເປັນເຈົ້າການ ແລະ ໃຫ້ການຮ່ວມມືແກ້ໄຂຜົນກວດສອບ ແລະ ກວດກາຕາມ ບົດລາຍງານຂອງ ອົງການກວດສອບປະຈໍາພາກເໜືອ 1 ແລະ ອົງການກວດກາລັດແຂວງ ຢ່າງເຄັ່ງຄັດ ເພື່ອແກ້ໄຂລາຍຮັບ-ລ່າຍຈ່າຍທີ່ກວດເຫັນເພີ່ມເຂົ້າແຜນງົບປະມານແຫ່ງລັດຂອງແຂວງ ປີ 2024;

1.5 ເອົາໃຈໃສ່ແກ້ໄຂບັນຫາການຮົ່ວໄຫຼຂອງການເກັບລາຍຮັບ ເປັນຕົ້ນ ການປະຕິບັດວຽກງານຂອງເຈົ້າໜ້າທີ່ ໃນຂົງເຂດຈັດເກັບລາຍຮັບ, ການມອບພັນທະພາສີ-ອາກອນ ຂອງບັນດາຫົວໜ່ວຍທຸລະກິດ ໂດຍມີມາດຕະການລົງໂທດຕໍ່ຜູ້ກະທໍາຜິດ ຢ່າງເດັດຂາດ ແລະ ເຂັ້ມງວດ;

1.6 ສືບຕໍ່ເອົາໃຈໃສ່ ຊີ້ນໍາ, ຕິດຕາມ ແລະ ຊຸກຍູ້ ໃຫ້ເມືອງ ເປັນເຈົ້າການໃນການຂຸດຄົ້ນ ທ່າແຮງບົ່ມຊ້ອນ ທາງດ້ານລາຍຮັບ ເພື່ອສ້າງຄວາມເຂັ້ມແຂງ ທາງດ້ານງົບປະມານ.

2. ດ້ານລາຍຈ່າຍ

2.1 ສືບຕໍ່ເອົາໃຈໃສ່ຄຸ້ມຄອງລາຍຈ່າຍຕາມມາດຕະການປະຢັດ ແລະ ຕ້ານການຟູມເຟືອຍ, ປະຕິບັດແຜນລາຍຈ່າຍບູລິມະສິດປະຈໍາປີຂອງອົງການປົກຄອງແຂວງ ໃຫ້ທັນເວລາ ແລະ ເບີກຈ່າຍຄົບຖ້ວນ ຕາມແຜນການ;

2.2 ການຈັດສັນເງິນເກີນແຜນ ປີ 2023 ໃຫ້ ນໍາໄປຊໍາລະ ໜີ້ສິນໂຄງການລົງທຶນຂອງລັດ ແລະ ຊໍາລະສະສາງຕາມຜົນການກວດສອບ;

2.3 ຄົ້ນຄວ້າເພີ່ມງົບປະມານ ເຂົ້າໃນວຽກງານການອອກໃບຕາດິນ, ການຄຸ້ມຄອງແຮງງານ, ການບໍລິການ-ທ່ອງທ່ຽວ ເພື່ອສ້າງເປັນຖານລາຍຮັບທີ່ມີຄວາມຍືນຍົງ ໃນການສ້າງລາຍຮັບເຂົ້າງົບປະມານແຫ່ງລັດໃນຕໍ່ໜ້າ ໃຫ້ຫຼາຍຂຶ້ນ;

2.4 ເອົາໃຈໃສ່ຄຸ້ມຄອງກອງທຶນຕາມນິຕິກໍາໃຕ້ກົດໝາຍ ທີ່ສະພາປະຊາຊົນແຂວງຮັບຮອງ

ໃຫ້ລວມສູນເຂົ້າງົບປະມານຕາມ ມາດຕາ 6 ແລະ ມາດຕາ 8 ຂອງກົດໝາຍວ່າ ດ້ວຍງົບປະມານແຫ່ງລັດ ແລະ ລະບຽບການກ່ຽວຂ້ອງ.

3. ການຄຸ້ມຄອງງົບປະມານ

3.1 ສືບຕໍ່ ເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ຕາມຄຳສັ່ງເລກທີ 18/ນຍ, ພ້ອມທັງເຜີຍແຜ່ບັນດານິຕິກຳດັ່ງກ່າວ ໃຫ້ກວ້າງຂວາງ ແລະ ນຳໃຊ້ຢ່າງເຂັ້ມງວດ;

3.2 ເອົາໃຈໃສ່ສືບຕໍ່ໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂົງເຂດການເງິນ-ງົບປະມານ ໃຫ້ທົ່ວເຖິງພາກສ່ວນເສດຖະກິດທີ່ກ່ຽວຂ້ອງ ເພື່ອໃຫ້ພະນັກງານ-ລັດຖະກອນ, ນັກທຸລະກິດ ແລະ ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ໂດຍສະເພາະ ການນຳໃຊ້ເງິນກີບ ການຊຳລະຜ່ານລະບົບທະນາຄານ.

## ມາດຕາ 5 ການຈັດຕັ້ງປະຕິບັດ

1. ມອບໃຫ້ ອົງການປົກຄອງແຂວງຊີ້ນຳ ບັນດາພະແນກການ, ອົງການຂັ້ນແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ສະມາຊິກ ສະພາສະພາປະຊາຊົນແຂວງ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

## ມາດຕາ 6 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ